# ປັດໄຈທາງເສດຖະກິດມະຫາພາກທີ່ມີຜົນຕໍ່ການຂະຫຍາຍຕົວຂອງເສດຖະກິດ 4 ແຂວງພາກໃຕ້ຂອງລາວ

**ສາຍສະໄຫວ ໄຊຍະວົງ[1], ຂັນທະລີ ພິມມະເສນ[2], ສັນຕິ ໂສພາ[3], ຈັນທະສອນ ວັນນະວົງ[4]**

*ຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລ ຈຳປາສັກ ສປປ ລາວ*

**ບົດຄັດຫຍໍ້**

ໃນການສຶກສາຄັ້ງນີ້ແມ່ນໄດ້ສຶກສາເຖິງ ປັດໄຈທາງເສດຖະກິດມະຫາພາກທີ່ມີຜົນຕໍ່ການຂະຫຍາຍຕົວຂອງເສດຖະກິດ ຂອງ 4 ແຂວງພາກໃຕ້ຂອງລາວ ຄືແຂວງ ຈຳປາສັກ, ແຂວງ ສາລະວັນ, ແຂວງ ເຊກອງ ແລະ ແຂວງ ອັດຕະປື. ຈຸດປະສົງໃນການສຶກສາ ເພື່ອສຶກສາສະພາບການຂະຫຍາຍຕົວຂອງເສດຖະກິດ 4 ແຂວງພາກໃຕ້ ແລະ ປັດໄຈທາງເສດຖະກິດມະຫາພາກທີ່ມີຜົນຕໍ່ການຂະຫຍາຍຕົວຂອງເສດຖະກິດ 4 ແຂວງພາກໃຕ້ຂອງລາວ ແຕ່ປີ 2006-2020 ສຳລັບການສຶກສາຄັ້ງນີ້ແມ່ນໄດ້ໃຊ້ຂໍ້ມູນທຸຕິຍະພູມ (ຂໍ້ມູນມືສອງ) ຈັດລຽນຂໍ້ມູນເປັນລັກສະນະແບບ Panel Data ທີ່ໄດ້ມາຈາກສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ, ພະແນກແຜນການ ແລະ ການລົງທຶນ,ພະແນກອຸດສາຫະກຳ-ການຄ້າ, ພະແນກການເງິນຂອງແຂວງ 4 ແຂວງພາກໃຕ້ ໂດຍການນຳໃຊ້ວິທີການທົດສອບທີ່ໃຊ້ແມ່ນ ມີ 3 ວິທີດັ່ງນີ້: Pooled Ordinary Lest Square, Fixed Effects Model ແລະ Random Effects Model ເພື່ອການວິເຄາະ, ຜົນຂອງການສຶກສາພົບວ່າ ໃນປີ 2020 ເສດຖະກິດ 4 ແຂວງພາກໃຕ້ ຍັງມີການ ສືບຕໍ່ແນວໂນມເພີ່ມຂຶ້ນຈາກປີ 2019, ຄືແຂວງຈຳປາສັກມີມູນຄ່າລວມຍອດຜະລິດຕະພັນພາຍໃນເຖິງ 20,553,286ລ້ານກີບ, ແຂວງສາລະວັນມີ 4,503,570 ລ້ານກີບ, ແຂວງເຊກອງມີມູນຄ່າເທົ່າກັບ 1,792,582 ລ້ານກີບ ແລະ ອັດຕະປື 2,532,466 ລ້ານ. ສຳລັບຜົນການວິໄຈພົບວ່າປັດໄຈທາງເສດຖະກິດມະຫາພາກທີ່ມີຜົນຕໍ່ກັບການຂະຫຍາຍຕົວທາງດ້ານເສດຖະ ກິດ ໂດຍນຳໃຊ້ຂໍ້ມູນໄຂວ່ຕາມອະນຸກົມເວລາ (Panel Data) ເຊິ່ງມີຈຳນວນແຂວງຢູ່ 4 ແຂວງ ແລະ ໄລຍະເວລາແຕ່ປີ 2006 – 2020. ໂດຍໃນການຄາດປະມານແມ່ນໄດ້ນຳໃຊ້ວິທີ Fixed Effect Model ເຊິ່ງຜົນການຄາດປະມານເຫັນວ່າ ປັດໄຈທາງມະຫາພາກທີ່ມີຜົນໃນທິດທາງບວກ ແລະ ມີລະດັບຄວາມເຊື່ອໝັ້ນທາງສະຖິຕິຫຼາຍກວ່າ 90% ໄດ້ແກ່: ລາຍຈ່າຍງົບປະມານຂອງແຂວງ, ປະຊາກອນໃນແຕ່ລະແຂວງ ແລະ ການສົ່ງອອກຂອງແຂວງ ດ້ວຍລະດັບຄວາມເຊື່ອໝັ້ນ 99% ແລະ 90% ຕາມລຳດັບ. ສ່ວນການນຳເຂົ້າສິນຄ້າແມ່ນເຫັນວ່າມີການພົວພັນໃນທິດທາງບວກ ແຕ່ລະດັບຄວາມເຊື່ອໝັ້ນບໍ່ຮອດ 90%.

***ຄຳສັບສຳຄັນ:*** *ເສດຖະກິດມະຫາພາກ, ການຂະຫຍາຍຕົວຂອງເສດຖະກິດ, Panel Data, Fixed Effect Model*

---

[1] ສາຍສະໄຫວ ໄຊຍະວົງ, ຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລ ຈຳປາສັກ, email: saisawaixayavongheer@gmail.com

[2] *ປອ ຂັນທະລີ ພິມມະເສນ, ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ,* email: *khphimmasenh@gmail.com*

[3] *ສັນຕິ ໂສພາ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ,* email: santidoungvilai@gmail.com

[4] *ຈັນທະສອນ ວັນນະວົງ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ,* email: Sonevnv@gmail.com

# MACROECONOMIC FACTORS INFLUENCINGECONOMIC GROWTH IN SOUTHERN OF LAOS

**Saisawai Xayavong[1], Dr Khanthaly PHIMMASEN[2], Santi SOPHA[3], Chanthasone VANNAVONG[4]**

*The Faculty of Economics and Management, Champasak University, Laos*

**Abstract**

In this study, the macro-economic factors that affect the growth of the economy of 4 provinces in the south are Champasak Province, Saravan Province, Sekong Province and Attaphu Province. The purpose of the study is to study the economic growth of the 4 southern provinces and the macroeconomic factors that affect the economic growth of the 4 southern provinces from 2006-2020. For this study, geographic data (second-hand data) was used to arrange the data in the form of Panel Data obtained from the National Statistics Center, Ministry of Planning and Investment, Department of Planning and Investment, Department of Industry-Trade, Department of Finance of the 4 southern provinces by using the test method used. There are 3 methods as follows: Pooled Ordinary Least Square, Fixed Effects Model and Random Effects Model for analysis. The results of the study found that in 2020, the economy of the four southern provinces continued to increase from 2019, namely Champasak province with a gross domestic product value of 20,553,286 million kip, Saravan province with 4,503,570 million kip, Sekong province with a value of 1,792,582 million kip and Attapeu province with 2,532,466 million kip. For The results of the research found that the macro-economic factors that have an effect on economic growth by using panel data which includes the number of provinces in 4 provinces and the period from 2006 to 2020. In the estimation, the Fixed Effect Model method was used. 90% respectively. As for the import of goods, it is seen that there is a relationship in a positive direction, but the level of confidence does not reach 90%

***Keywords:*** *Economic growth, Gross Domestic Product, Panel Data, Fixed Effect Model*

---

[1] Saisawai Xayavong, Faculty of Economics and Management, Email: saisawaixayavongheer@gmail.com
[2] Khanthaly PHIMMASEN, Faculty of Education, Email: *khphimmasenh@gmail.com*
[3] Santi SOPHA, Faculty of Economics and Management, Email: santidoungvilai@gmail.com
[4] Chanthasone VANNAVONG, Faculty of Economics and Management, Email: Sonevnv@gmail.com

## 1. ພາກສະເໜີ

ສ.ປ.ປ.ລາວ ໄດ້ຮັບການສະຖາປານາວັນທີ 2 ທັນວາ 1975 ເສດຖະກິດຢູ່ໃນປະເທດໄດ້ສືບຕໍ່ເປີດ ກວ້າງ ແລະ ພັດທະນາເປັນບາດກ້າວຈົນມາຮອດທ້າຍຊຸມປີ 1980 ແລະ ຕົ້ນຊຸມປີ 1990 ສ.ປ.ປ.ລາວ ໄດ້ ປະຕິບັດກົນໄກຄຸ້ມຄອງເສດຖະກິດໃໝ່ ເພື່ອຂ້າມຜ່ານການວາງແຜນແບບລວມສູນໄປສູ່ເສດຖະກິດຕະຫຼາດ ສະນັ້ນ, ພັກ ແລະ ລັດຖະບານໄດ້ເອົາໃຈໃສ່ໃນການຊຸກຍູ້ການຜະລິດທີ່ມີຄວາມສາມາດ ແລະ ຄວາມສະດວກ ຈົນເຮັດໃຫ້ມີສິນຄ້າທີ່ສາມາດສົ່ງອອກຕ່າງປະເທດໄດ້ຫຼາຍຂຶ້ນ ໂດຍສະເພາະແມ່ນສິນຄ້າກະສິກຳນັບມື້ນັບມີ ຈຳນວນເພີ່ມຂຶ້ນ ແຕ່ກົງກັນຂ້າມກັບສິນຄ້າອຸດສະຫະກຳແມ່ນຍັງບໍ່ທັນມີການຂະຫຍາຍຕົວຫຼາຍປານໃດ

ຕໍ່ມາປະເທດລາວໄດ້ເປີດປະເທດເຂົ້າສູ່ສາກົນໂດຍການເປີດກວ້າງການລົງທຶນຕາມແຜນງານເສດຖະກິດແບບ ໃໝ່ໃນປີ 1986, ເຫັນວ່າເສດຖະກິດຂອງປະເທດເພີ່ມຂຶ້ນໂດຍສະເລ່ຍແມ່ນເທົ່າກັບ 6.3% ຕໍ່ປີ ຍ້ອນພັກ ແລະ ລັດຖະບານມີການໃຊ້ຈ່າຍ ແລະ ການລົງທຶນເພີ່ມຂຶ້ນ, ມີການໄຫຼເຂົ້າຂອງເງິນຕາຈາກຕ່າງປະເທດເພີ່ມ ຂຶ້ນ ແລະ ມີມູນຄ່າການສົ່ງອອກເພີ່ມຂຶ້ນ (ກະຊວງແຜນການ ແລະ ການລົງທຶນ, 1990).

ຊຸມປີ 1990 ເສດຖະກິດລາວເກີດມີການຜັນແປຍ້ອນປັດໄຈພາຍໃນ ແລະ ພາຍນອກເຊັ່ນ: ໃນປີ 1991 ແມ່ນໄພ ແຫ້ງແລ້ງ, ປີ 1997 ໄດ້ເກີດວິກິດການການເງິນໃນອາຊີເຮັດໃຫ້ເສດຖະກິດລາວໃນໄລຍະນັ້ນຕົກຕໍ່າ ແຕ່ພໍ ມາຮອດ ປີ 2000 ເສດຖະກິດໃນ ສປປ ລາວ ໄດ້ມີການຟື້ນຟູຂຶ້ນ ແລະ ຂະຫຍາຍຕົວຂຶ້ນສະເລ່ຍ 6-7% ຕໍ່ ປີ ເຖິງຢ່າງໃດກໍ່ຕາມເສດຖະກິດລາວກໍ່ຍັງປະສົບກັບບັນຫາການຂາດດຸນທາງດ້ານການເງິນ 8.22% ຂອງ GDP ແລະ ຂາດດຸນທາງດ້ານການຄ້າ 10.34% ຂອງ GDP ທີ່ເປັນບັນຫາຊ້ຳເຮື້ອຢູ່. (ທະນະຄານແຫ່ງ ສ.ປ.ປ ລາວ, 2000).

ໃນ ປີ 2012 ເສດຖະກິດລາວມີອັດຕາການຂະຫຍາຍຕົວ 7.9% ແມ່ນໄດ້ຮັບແຮງຍູ້ໜູ ນຈາກລາຍຮັບຂອງຂະແໜງບໍ່ແຮ່ທີ່ເພີ່ມຂຶ້ນ ພ້ອມດ້ວຍລາຍຮັບຈາກຜົນຜະລິດທອງ ແດງທີ່ເພີ່ມຂຶ້ນປະມານ 8% ແລະ ຜົນຜະລິດເພີ່ມຂຶ້ນ 61% ໃນຂະນະທີ່ລາຍຮັບຈາກຂະແໜງພະລັງງານ 29% ແລະ ການເພີ່ມຂຶ້ນ ຂອງຈຳນວນນັກທ່ອງທ່ຽວທີ່ເຂົ້າມາທ່ຽວປະເທດລາວ 22% ເທົ່າກັບ 3.3 ລ້ານກວ່າຄົນ ໃນຄະນະດຽວກັນ ການຈະເລີນເຕີບໂຕຂອງຂະແໜງກະສິກຳເພີ່ມຂຶ້ນ 2,5% ຍ້ອນຜົນໄດ້ຮັບຈາກການເກັບກ່ຽວມັນຕົ້ນ, ຜະລິດຕະພັນທາດແປ້ງຕ່າງໆ, ສັດລ້ຽງ ແລະ ສັດປີກເພີ່ມຂຶ້ນ ແຕ່ຜົນຜະລິດເຂົ້າຫຼຸດລົງເນື່ອງຈາກເກີດໄພນ້ຳ ຖ້ວມ, ອັດຕາເງິນເຟີ້ໃນປີ 2012 ແມ່ນຢູ່ໃນລະດັບ 4.3% (ທະນະຄານແຫ່ງ ສ.ປ.ປ ລາວ, 2012).

ຕົກມາ ຮອດປີ 2015 ເສດຖະກິດກໍ່ໄດ້ມີການເພີ່ມຂຶ້ນ 7.4 % ຂະແໜງການທີ່ເພີ່ມສູງແມ່ນອຸດສາຫະກຳເພີ່ມຂຶ້ນ 9 7% ຂະແໜງບໍລິການ 9,1% ແລະ ຂະແໜງກະສິກຳ 3 3% ເຊິ່ງປັດໄຈທີ່ເຮັດໃຫ້ເສດຖະກິດຂະຫຍາຍຕົວ ຢ່າງຕໍ່ເນື່ອງຍ້ອນການລົງທຶນໂດຍກົງຂອງຕ່າງປະເທດ ໃນຂະແໜງກໍ່ສ້າງ, ໄຟຟ້າ ແລະ ບໍລິ ການ. ອັດຕາເງິນ ເຟີ້ສະເລ່ຍໃນປີແມ່ນ 1.28% ເຊິ່ງເປັນອັດຕາເງິນເຟີ້ທີ່ຕໍ່າສຸດໃນໄລຍະ 5 ປີ ເຊິ່ງເປັນສາເຫດ ມາຈາກລາຄານ້ຳມັນເຊື້ອໄຟທີ່ຫຼຸດລົງ. ຂາດດຸນທາງການເງິນ 4,8% ຂອງ GDP ແລະ ຂາດດຸນທາງການຄ້າ 20% ຂອງ 6. ທະນະຄານແຫ່ງ ສ ປ ປ ລາວ. 2015)

ພາກໃຕ້ຂອງ ສ.ປ.ປ ລາວ ປະກອບມີ 4 ແຂວງຄື: ແຂວງ ຈໍາປາສັກ, ແຂວງ ສາລະວັນ, ແຂວງ ເຊ ກອງ ແລະ ແຂວງ ອັດຕະປື ມີທີ່ຕັ້ງເປັນຈຸດຍຸດທະສາດ ແລະ ຈຸດໃຈກາງລະຫວ່າງກໍາປູເຈຍ , ຫວຽດນາມ ແລະ ລາຊາອານາຈັກໄທ ເຊິ່ງເປັນເຂດເຊື່ອມໂຍງເສດຖະກິດ-ການຄ້າ, ການລົງທຶນ, ການທ່ອງທ່ຽວ ແລະ ການຮ່ວມມືທາງດ້ານວັດທະນາທໍາ-ສັງຄົມ ມີເສັ້ນທາງຫຼວງແຫ່ງຊາດເຊື່ອມຕໍ່ບັນດາແຂວງພາກໃຕ້ເຂົ້າຫາ ກັນ ແລະ ຕໍ່ໃສ່ບັນດາແຂວງພາກກາງ ເຊິ່ງອໍານວຍຄວາມສະດວກໃຫ້ແກ່ການຄ້າຂາຍ ແລະ ສິ່ງຜົນໃຫ້ເສດຖະກິດມີການພັດທະນາ ແລະ ຂະຫຍາຍຕົວຍິ່ງຂຶ້ນ. 4 ແຂວງພາກໃຕ້ ຍັງອຸດົມຮັ່ງມີໄປດ້ວຍແຫຼ່ງຊັບພະຍາກອນທໍາມະຊາດຕ່າງໆ ແລະ ມີມູນຄ່າມະຫາສານເປັນຕົ້ນແມ່ນ ດິນ, ນໍ້າ, ປ່າໄມ້, ບໍ່ຄໍາ, ບໍ່ເງິນ, ບໍ່ ທອງແດງ ແລະ ອື່ນໆ. ພ້ອມທັງມີສະຖານທີ່ທ່ອງທ່ຽວທີ່ຫຼາກຫຼາຍ ໂດຍສະເພາະແມ່ນການທ່ອງທ່ຽວທາງ ດ້ານວັດທະນາທໍາ, ຊົນເຜົ່າ, ຮີດຄອງປະເພນີ, ປະຫວັດສາດ ແລະ ການອະນຸລັກສະຖານທີ່ສໍາຄັນຕ່າງໆ ເຊັ່ນ: ນໍ້າຕົກຕາດຄອນພະເພັງ ແລະ ວັດພູ ຂອງແຂວງ ຈໍາປາສັກ. ການພັດທະນາເສດຖະກິດຂອງ 4 ແຂວງພາກໃຕ້ ແມ່ນນັບມື້ນັບຂະຫຍາຍຕົວຢ່າງຕໍ່ເນື່ອງຕາມບາດກ້າວ, ໃນການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດມາເປັນທິດທາງ ແລະ ເປົ້າໝາຍຂອງການພັດທະນາ.

ຈາກເງື່ອນໄຂຂອງບັນດາແຂວງເຫຼົ່ານີ້ຈຶ່ງເຮັດໃຫ້ເສດຖະກິດມີການຂະຫຍາຍຕົວ, ມີການລົງທຶນທັງພາຍໃນແລະຕ່າງປະເທດ, ການພົວພັນການຄ້າກັບ ຕ່າງປະເທດ, ການເຄື່ອນຍ້າຍແຮງງານເຮັດໃຫ້ມີແຮງງານເພີ່ມຂຶ້ນ. ການຂະຫຍາຍຕົວຂອງເສດຖະກິດແມ່ນ ຄາດໝາຍຂອງແຕ່ລະປະເທດ ເພາະໝາຍເຖິງການທີ່ປະຊາຊົນໃນຊາດມີລະດັບຊີວິດການເປັນຢູ່ທີ່ດີຂຶ້ນ,ການທີ່ຈະພັດທະນາເສດຖະກິດແມ່ນຈໍາເປັນຕ້ອງມີນະໂຍບາຍສອດຄ່ອງກັບສະພາບເສດຖະກິດຕົວຈິງ ກ່ອນ ຈະວາງນະໂຍບາຍແມ່ນຄວນສຶກສາເຖິງທ່າແຮງ, ອຸປະສັກ ແລະ ຈຸດດ້ອຍຂອງການພັດທະນາ ເພື່ອນໍາໄປສູ່ ການພັດທະນາທີ່ຖືກຕ້ອງ ແລະ ເກີດປະສິດທິພາບສູງສຸດ.

ທີ່ຜ່ານມາກໍ່ມີຫຼາຍງານວິໄຈທີ່ໄດ້ສຶກສາເຖິງປັດໄຈທີ່ມີຜົນກະທົບຕໍ່ການຈະເລີນເຕີບໂຕຂອງເສດຖະກິດຂອງປະເທດ ແລະ ລະດັບພາກພື້ນໂດຍສະເພາະປັດໄຈເສດຖະກິດມະຫາພາກ ເຊິ່ງໃນງານວິໄຈຂອງOyebowale and Algarhi (2020) ໄດ້ພົບວ່າປັດໄຈການສະສົມທຶນ, ລາຍຈ່າຍງົບປະມານຂອງລັດຖະບານ ແລະ ປະລິມານເງິນໃນລະບົບເສດຖະກິດຂອງປະເທດມີຜົນຕໍ່ການເຕີບໂຕທາງເສດຖະກິດຂອງປະເທດໃນທະວີບແຟຣິກາ ແລະໃນງານວິໄຈຂອງ Taş, Hepsen et al. (2013) ປັດໄຈຂອງອັດຕາການເຕີບໂຕຂອງລາຍຈ່າຍພາກລັດຖະບານ ແລະ ເປີເຊັນຂອງກໍາລັງແຮງງານຂອງປະເທດແມ່ນມີຜົນຕໍ່ການເຕີບໂຕຂອງເສດຖະກິດຂອງກຸ່ມປະເທດໃນສະຫະພາບເອີຣົບ ແລະ ງານວິໄຈຂອງ Ndambiri, Ritho et al. (2012) ໄດ້ພົບວ່າການໃຊ້ຈ່າຍຂອງລັດຖະບານ, ການສົ່ງອອກສິນຄ້າ ແລະການບໍລິການ, ທຶນມະນຸດ ແລະການຊ່ວຍເຫຼືອຕ່າງປະເທດ ແມ່ນເປັນຕົວກໍານົດຂອງການຂະຫຍາຍຕົວຂອງ 19 ປະເທດໃນທະວີບອາຟຣິກາ. ຈາກທີ່ມາ ແລະ ຄວາມສໍາຄັນທີ່ກ່າວມາ ນັ້ນຜູ້ວິໄຈມີຈຸດປະສົງເພື່ອວິໄຈເຖິງປັດໄຈທາງເສດຖະກິດມະຫາພາກທີ່ມີຜົນຕໍ່ການຂະຫຍາຍຕົວຂອງເສດຖະກິດ 4 ແຂວງພາກໃຕ້ຂອງລາວ ໃນຊ່ວງປີໄລຍະເວລາແຕ່ປີ 2006 – 2020.

ດັ່ງນັ້ນ, ການສຶກສາຂອງເຮົາໃນຄັ້ງນີ້ຈຶ່ງ ມີຄວາມສົນໃຈຢາກສຶກສາປັດໄຈທາງດ້ານເສດຖະກິດມະຫາພາກທີ່ມີຜົນຕໍ່ການຂະຫຍາຍຕົວຂອງ ເສດຖະກິດ 4 ແຂວງພາກໃຕ້ຂອງ ສ ປ ປ ລາວ

## 2. ຈຸດປະສົງ

2.1 ເພື່ອສຶກສາສະພາບການຂະຫຍາຍຕົວຂອງເສດຖະກິດ 4 ແຂວງພາກໃຕ້ຂອງລາວ

2.2 .ເພື່ອສຶກສາເຖິງປັດໄຈທາງເສດຖະກິດມະຫາພາກທີ່ມີຜົນຕໍ່ການຈະເລີນໂຕຂອງເສດ ຖະກິດ 4 ແຂວງພາກໃຕ້ຂອງລາວ ແຕ່ປີ 2006-2020.

## 3. ວິທີການຄົ້ນຄວ້າ

ການເກັບກຳ ແລະ ລວບລວມຂໍ້ມູນ ໄດ້ມີການນຳໃຊ້ວິທີການສຶກສາຂໍ້ມູນແບບທຸຕິຍະພູມ ຂໍ້ມູນມູນຄ່າລວມຍອດຜະລິດຕະພັນພາຍໃນຂອງແຂວງ, ມູນຄ່າລາຍຈ່າຍງົບປະມານຂອງແຂວງ, ມູນຄ່າການສົ່ງອອກສິນຄ້າ, ມູນຄ່າການນຳເຂົ້າສິນຄ້າ ແລະ ຈຳນວນປະຊາກອນຂອງແຂວງ ແມ່ນໄດ້ ຈາກພະແນກແຜນການ ແລະ ການລົງທຶນຂອງແຂວງ. ໄດ້ໃຊ້ຂໍ້ມູນ Panel Data. ຈຳນວນຂໍ້ມູນໄຂ່ວແມ່ນແຂວງ ຈຳປາສັກ, ແຂວງ ສາລະວັນ, ແຂວງ ເຊກອງ ແລະ ແຂວງ ອັດຕະປື ແລະ ຂໍ້ມູນອະນຸກົມເວລາ ແມ່ນຂໍ້ມູນລາຍປີຂອງແຕ່ລະແຂວງນັບຕັ້ງແຕ່ປີ 2006-2020

ແບບຈຳລອງທີ່ໃຊ້ໃນການສຶກສາ:ໃນການວິເຄາະຄັ້ງນີ້ ຈະຫາຄວາມສຳພັນກັນລະຫວ່າງຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະ ເຊິ່ງອີງຕາມແບບຈຳລອງຂອງ Taş, Hepsen et al. (2013) ສາມາດຂຽນໄດ້ດັ່ງນີ້:

$$\ln GDP_{it} = \alpha_I + \beta_{1i} \ln EP_{it} + \beta_{2i} \ln EX_{it} + \beta_{3i} \ln IM_{it} + \beta_{4i} \ln POP + \varepsilon_{it}$$

ເຊິ່ງ i = 1, 2,….,10 ແລະ t = 1, 2,…, 20

ໂດຍ $\ln GDP_{it}$ = ຄ່າ Natural Logarithm ຂອງມູນຄ່າລວມຍອດຜະລິດຕະພັນຂອງແຂວງ i ໃນເວລາ t

In $EP_{it}$ = ຄ່າ Natural Logarithm ຂອງລາຍຈ່າຍງົບປະມານຂອງແຂວງ ¡ ໃນເວລາ t

In $EX_{it}$ = ຄ່າ Natural Logarithm ຂອງມູນຄ່າການສົ່ງອອກສິນຄ້າຂອງແຂວງ i ໃນເວລາ t

In $IM_{it}$ = ຄ່າ Natural Logarithm ຂອງມູນຄ່າການນຳເຂົ້າສິນຄ້າຂອງແຂວງ i ໃນເວລາ t

In $POP_{it}$ = ຄ່າ Natural Logarithm ຂອງປະຊາກອນຂອງແຂວງ i ໃນເວລາ t

$\varepsilon_{it}$ = ຄ່າຄວາມຄາດເຄື່ອນ

$\alpha$ ແລະ $\beta_0$, $\beta_1$, $\beta_2$, $\beta_3$ ,$\beta_4$ ແມ່ນຄ່າພາລາມິເຕີ.

ວິທີວິເຄາະຂໍ້ມູນ: ແມ່ນໃຊ້ Panel Model ແລະ ວິທີການທົດສອບທີ່ໃຊ້ແມ່ນມີ 3 ວິທີຄື: Pooled Ordinary Lest Square, Fixed Effect Model, Random Effects Model

ຂັ້ນຕອນໃນການຄາດປະມານຂໍ້ມູນ: ເຮົາຈະໄດ້ມີການທົດສອບຄວາມນິ່ງຂອງຂໍ້ມູນ (Unit root test) ໂດຍນຳໃຊ້ວິທີ Levin, Lin and Chu (LLC) test (2002). ຈາກນັ້ນ ໄດ້ທົດສອບ Hausman Test ເພື່ອຈະທົດ ສອບເບິ່ງວ່າ ໃນການຄາດປະມານ Panel Model ເຮົາຈະໃຊ້ວິທີFixed Effect Model (FEM) ຫຼືRandom Effect Model (REM). ນອກຈາກນີ້ ຍັງໄດ້ມີການກວດສອບບັນຫາທາງເສດຖາມິຕິທີ່ຈະເກີດກັບການຄາດປະມານແບບຈຳລອງໄດ້ແກ່: ບັນຫາສະຫະສຳພັນ (Heteroskedasticity problem) ແລະ ບັນຫາຄວາມສຳພັນຂອງຕົວຄາດເຄື່ອນ (Auto-correlation problem)

## 4. ຜົນໄດ້ຮັບ

ສະພາບການຂະຫຍາຍຕົວຂອງເສດຖະກິດ 4 ແຂວງພາກໃຕ້ຂອງລາວແຕ່ປີ 2006-2020- ເສັ້ນສະແດງການປ່ຽນແປງລວມຍອດຜະລິດຕະພັນພາຍຂອງ 4 ແຂວງພາກໃຕ້ແຕ່ປີ 2006-2020




- ແຜນມິນສະແດງການແບ່ງສ່ວນລວມຍອດຜະລິດຕະພັນຂອງສີ່ແຂວງພາກໃຕ້ໃນປີ 2020.




- ເສັ້ນສະແດງລາຍຈ່າຍງົບປະມານຂອງ 4 ແຂວງພາກໃຕ້ແຕ່ປີ 2006- 2020




- ເສັ້ນສະແດງມູນຄ່າການສົ່ງອອກສິນຄ້າຂອງ 4 ແຂວງພາກໃຕ້ແຕ່ປີ 2006- 2020




- ເສັ້ນສະແດງມູນຄ່າການນຳເຂົ້າສິນຄ້າຂອງ 4 ແຂວງພາກໃຕ້ແຕ່ປີ 2006- 2020




- ເສັ້ນສະແດງເຖິງຈານວນປະຊາກອນຂອງ 4 ແຂວງພາກໃຕ້ແຕ່ປີ 2006- 2020



ຜົນການສຶກສາໃນການທົດສອບເຖິງ ປັດໄຈທາງເສດຖະກິດມະຫາພາກຕໍ່ກັບການຈະເລີນເຕີບໂຕຂອງເສດຖະກິດໃນ 4 ແຂວງພາກໃຕ້ ໄດ້ນຳໃຊ້ການວິເຄາະດ້ວຍສະຖິຕິອະນຸມານ ຫຼື ການວິເຄາະແບບປະລິມານ (Quantitative Analysis) ໂດຍຈະໄດ້ໃຊ້ຂໍ້ມູນໄຂວ່ຕາມອະນຸກົມເວລາ (Panel Data) ໂດຍມີໄລຍະເວລາຂອງຂໍ້ມູນແຕ່ປີ 2006-2020. ໂດຍຜົນການກວດສອບຄວາມນິ່ງຂອງຂໍ້ມູນດ້ວຍວິທີ Levin, Lin and Chu (LLC) test (2002). ສັງເກດເຫັນວ່າ ທຸກໆຕົວປ່ຽນທີ່ເຮົາຈະໃຊ້ໃນແບບຈຳລອງແມ່ນມີລັກສະນະນິ່ງຢູ່ທີ່ຄ່າລະດັບ ຫຼື Level ຫຼື $I_0$ ເຊິ່ງເຮົາສາມາດເບິ່ງໄດ້ຈາກຄ່າ P – Value ຂອງແຕ່ລະຕົວປ່ຽນ ທີ່ເຫັນວ່າມີຄ່າຕໍ່າກວ່າ $\alpha = 0.1$ ໝາຍຄວາມວ່າ ເຮົາສາມາດປະຕິເສດສົມມຸດຖານຫຼັກ ($H_0$) ໄດ້. ນອກນີ້, ເຮົາຍັງໄດ້ມີການທົດສອບ Hausman test ເພື່ອທົດສອບເບິ່ງວ່າ ໃນການຄາດປະມານແບບຈຳລອງເຮົາຄວນຈະໃຊ້ແບບຈຳລອງໃດຈຶ່ງຈະເໝາະສົມ ຈາກຜົນການຄາດປະມານໄດ້ສະແດງໃຫ້ເຫັນວ່າ: ຄ່າຂອງ Prob>chi2 = 0.0000 ເຫັນວ່າມີຄ່ານ້ອຍກວ່າ $\alpha = 0.1$ ຫຼື ປະຕິເສດສົມມຸດຖານຫຼັກ ($H_0$); ໝາຍຄວາມວ່າ ການຄາດປະມານດ້ວຍ Fixed Effect Model ເປັນວິທີທີ່ເໝາະສົມທີ່ສຸດໃນການຄາດປະມານແບບຈຳລອງ ເພື່ອສຶກສາເຖິງປັດໄຈທາງເສດຖະກິດມະຫາພາກຕໍ່ກັບການຈະເລີນເຕີບໂຕທາງດ້ານເສດຖະກິດ. ຈາກນີ້ ເຮົາໄດ້ມີການກວດສອບບັນຫາສະຫະສຳພັນ ແລະ ບັນຫາຄວາມສຳພັນຂອງຕົວຄາດເຄື່ອນເຊິ່ງຈາກຜົນການທົດສອບບັນຫາສະຫະສຳພັນເຫັນວ່າຄ່າ Prob > Chi2 = 0.0000 ເຊິ່ງໜ້ອຍກວ່າ $\alpha = 0.1$ ສະແດງວ່າປະຕິເສດສົມມຸດຖານຫຼັກ ຫຼື ເວົ້າໄດ້ວ່າເກີດບັນຫາສະຫະສຳພັນ. ສ່ວນການກວດສອບບັນຫາຄວາມສຳພັນຂອງຕົວຄາດເຄື່ອນເຫັນວ່າ ຄ່າ Prob > F = 0.0012 ມີຄ່າໜ້ອຍວ່າ $\alpha = 0.1$ ສະແດງວ່າປະຕິເສດສົມມຸດຖານຫຼັກ ຫຼື ເວົ້າໄດ້ວ່າເກີດບັນຫາຄວາມສຳພັນຂອງຕົວຄາດເຄື່ອນ. ເມື່ອເຫັນວ່າເກີດບັນຫາ ຜູ້ສຶກສາຈຶ່ງໄດ້ແກ້ບັນຫາ ເນື່ອງຈາກວ່າ ຂໍ້ມູນຂອງເຮົາມີຄ່າ N < T ສະນັ້ນ ການແກ້ໄຂບັນຫາຈຶ່ງເຫັນວ່ານຳໃຊ້ວິທີຂອງ GLS ຈະເໝາະສົມທີ່ສຸດ (Hoechle, 2007) ໂດຍເມື່ອແກ້ໄຂບັນຫາແລ້ວ ຈະໄດ້ຜົນການຄາດປະມານແບບຈຳລອງຂອງເຮົາດັ່ງລຸ່ມນີ້:

ຕາຕາລາງສະແດງຜົນການຄາດປະມານຕາມແບບຈຳລອງ Fixed Effect Model

| ຕົວປ່ຽນ | ຊື່ຕົວປ່ຽນພາສາລາວ | Coef | z | P>z |
|---|---|---|---|---|
| LnEP | ລາຍຈ່າຍງົບປະມານຂອງແຂວງໃນແຕ່ລະປີ | 0.1811*** | 2.85 | 0.004 |
| LnExport | ມູນຄ່າການສົ່ງອອກສິນຄ້າຂອງແຂວງ | 0.1957* | 1.83 | 0.067 |
| LnImport | ມູນຄ່າການນຳເຂົ້າສິນຄ້າຂອງແຂວງ | -0.1005 | -1.13 | 0.257 |
| LnPop | ຈຳນວນປະຊາກອນຂອງແຂວງ | 1.1377*** | 8.54 | 0.000 |
| Cons | ຄ່າຄົງທີ | -2.7909 | -1.74 | 0.086 |
| Number of obs = 60 | | Wald chi2 (4) =125.69 | | |
| Number of groups = 4 | | Prob> Chi2 = 0.0000 | | |
| Time periods = 15 | | R squared = 0.7497 | | |

**ໝາຍເຫດ: ເຄື່ອງໝາຍ *,**,*** ໝາຍເຖິງລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 90%,95% ແລະ 99% ຕາມລຳດັບ.**

ເມື່ອນຳຂໍ້ມູນມາພິຈາລະນາຄ່າ Prob > chi2 = 0.0000 ເຫັນວ່າ ແບບຈຳລອງທີ່ເຮົາຄາດປະມານສາມາດໃຊ້ໄດ້ໃນລະດັບຄວາມເຊື່ອໝັ້ນ 99% ແລະ R-square ພົບວ່າມີຄ່າເທົ່າກັບ 0.7497 ສະແດງໃຫ້ເຫັນວ່າ ຕົວປ່ຽນທີ່ໄດ້ກຳນົດໃນແບບຈຳລອງ ສາມາດອະທິບາຍຕົວປ່ຽນຕາມໄດ້ ໃນລະດັບ 74.97%. ຜົນຈາກການຄາດປະມານເຫັນວ່າ: ການໃຊ້ຈ່າຍຂອງລັດຖະບານ (EP) ລາຍຈ່າຍຂອງລັດຖະບານແມ່ນມີຜົນໃນທິດທາງບວກຕໍ່ກັບລວມຍອດຜະລິດຕະພັນພາຍໃນ (GDP) ດ້ວຍລະດັບຄວາມເຊື່ອໝັ້ນ 95% ໝາຍຄວາມວ່າ ເມື່ອລັດຖະບານມີການໃຊ້ຈ່າຍເພີ່ມຂຶ້ນ 1% ຈະສົ່ງຜົນເຮັດໃຫ້ GDP ເພີ່ມຂຶ້ນ 0.18%. ການສົ່ງອອກສິນຄ້າ (Export) ການສົ່ງອອກສິນຄ້າ ແມ່ນມີຜົນໃນທິດທາງບວກຕໍ່ກັບລວມຍອດຜະລິດຕະພັນພາຍໃນ ດ້ວຍລະດັບຄວາມເຊື່ອໝັ້ນ 90%. ໝາຍຄວາມວ່າ ເມື່ອການສົ່ງອອກເພີ່ມຂຶ້ນ 1% ຈະສົ່ງຜົນເຮັດໃຫ້ GDP ເພີ່ມຂຶ້ນ 0.19%. ການນຳເຂົ້າສິນຄ້າ (Import) ການສົ່ງອອກສິນຄ້າ ແມ່ນມີການພົວພັນໃນທິດທາງລົບຕໍ່ກັບ GDP ແຕ່ລະດັບຄວາມເຊື່ອໝັ້ນບໍ່ຮອດ 90%. ປະຊາກອນ (POP) ປະຊາກອນແມ່ນມີຜົນໃນທິດທາງບວກຕໍ່ກັບລວມຍອດຜະລິດຕະພັນພາຍໃນ ດ້ວຍລະດັບຄວາມເຊື່ອໝັ້ນ 99% ໝາຍຄວາມວ່າ ເມື່ອປະຊາກອນເພີ່ມຂຶ້ນ 1% ຈະສົ່ງຜົນໃຫ້ GDP ເພີ່ມຂຶ້ນ 4.64%.

## 4. ວິພາກຜົນ

ຈາກຜົນການໃຊ້ຈ່າຍຂອງລັດຖະບານທີ່ເຫັນວ່າມີຜົນໃນທິດທາງບວກ ຕໍ່ກັບລວມຍອດຜະລິດຕະພັນພາຍໃນຂອງ 4 ແຂວງພາກໃຕ້ລາວ ເຊິ່ງສອດຄອງກັບຜົນການວິໄຈຂອງ Taş, Hepsen et al. (2013) ທີ່ພົບວ່າ ລາຍຈ່າຍຂອງລັດຖະບານນັ້ນສົ່ງຜົນຕໍ່ເສດຖະກິດຂອງກຸ່ມປະເທດໃນຢູໂຣບ ຫມາຍຄວາມຖ້າຫາກລັດຖະບານມີການເພີ່ມຄ່າໃຊ້ຈ່າຍຂອງລັດໃນດ້ານຕ່າງໆເຊັ່ນ ການສ້າງສິ່ງອຳ ນວຍຄວາມສະດວກເພື່ອກະຕຸ້ນການລົງທຶນ, ການຈ້າງງານ ແລະ ການບໍລິໂພກລວມຂອງພາກເອກະຊົນເພີ່ມຂຶ້ນ ທີ່ຈະເປັນຜົນດີຕໍ່ກັບເສດຖະກິດ ເຮັດໃຫ້ເສດຖະກິດມີການຈະເລີນເຕີບໂຕດີຍິ່ງຂຶ້ນ ແລະ ຍັງສອດຄ່ອງກັບຜົນງານວິໄຈຂອງ Oyebowale and Algarhi (2020) ແລະ Ndambiri, Ritho et al. (2012). ສາລັບການສົ່ງອອກໂດຍອີງຕາມຫຼັກທິດສະດີກໍເຫັນວ່າ ການສົ່ງອອກຈະມີຜົນເຮັດ GDP ເພີ່ມຂຶ້ນເຊັ່ນກັນກັບບົດວິໄຈຂອງ ແລະ Ndambiri, Ritho et al. (2012) ທີ່ພົບວ່າມູນຄ່າການສົ່ງອອກສິນຄ້າ ແລະ ບໍລິການແມ່ນສົ່ງຜົນຕໍ່ກັບເສດຖະກິດຂອງ 16 ປະເທດໃນອາຟຣິກາ ຫມາຍຄວາມວ່າ ເມື່ອມີການສົ່ງອອກສິນຄ້ານັ້ນກໍໝາຍຄວາມວ່າ ຜົນລວມການຜະລິດທັງສິນຄ້າ ແລະ ບໍລິການມີການເພີ່ມຂຶ້ນ ມີຜົນເຮັດໃຫ້ມີເງິນຕາໄຫຼເຂົ້າມາໃນປະ ເທດ ມີຜົນດີຕໍ່ກັບເສດຖະກິດໂດຍລວມນັ້ນເອງ. ສ່ວນດ້ານປະຊາກອນກໍເຫັນວ່າສອດຄ່ອງກັບທິດສະດີການຜະລິດຂອງ Cobb, C. W & Douglas, P. H. (1928)ທີ່ໄດ້ບອກວ່າ ກຳລັງແຮງງານເປັນປັດໄຈໜຶ່ງຂອງຕຳລາການຜະລິດ ໝາຍຄວາມວ່າ ກຳລັງແຮງງານ ຫຼື ປະຊາກອນນີ້ ຈະເປັນທຶນມະນຸດໜຶ່ງທີ່ເປັນສ່ວນປະ ກອບທີ່ສຳຄັນຂອງການຜະລິດ ແລະ ຍັງເປັນສ່ວນໜຶ່ງທີ່ເປັນຕົວຊ່ວຍໃນການບໍລິໂພກ ເຊິ່ງເປັນຕົວທີ່ສຳຄັນໃນການກະຕຸ້ນໃຫ້ເສດຖະກິດມີການຂະຫຍາຍຕົວທີ່ສອດຄ່ອງກັບຜົນງານວິໄຈຂອງ Taş, Hepsen et al. (2013).

## 6. ສະຫຼຸບຜົນ

ໃນການສຶກສາຄັ້ງນີ້ແມ່ນໄດ້ສຶກສາເຖິງປັດໄຈທາງເສດຖະກິດມະຫາພາກທີ່ຜົນຕໍ່ການຂະຫຍາຍຕົວ ຂອງເສດຖະກິດຂອງ 4 ແຂວງພາກໃຕ້ຂອງລາວ ຈຸດປະສົງໃນການສຶກສາ ເພື່ອສຶກສາສະພາບການຂະຫຍາຍ ຕົວຂອງເສດຖະກິດ ແລະ ປັດໄຈທາງເສດຖະກິດມະຫາພາກທີ່ມີຜົນຕໍ່ການຂະຫຍາຍຕົວຂອງເສດຖະກິດ 4 ແຂວງພາກໃຕ້ຂອງລາວ ແຕ່ປີ 2006-2020 ໂດຍການສຶກສາລາຍຈ່າຍງົບປະມານຂອງແຂວງ, ມູນຄ່າການສົ່ງ ອອກສິນຄ້າຂອງແຂວງ, ມູນຄ່າການນຳເຂົ້າສິນຄ້າຂອງແຂວງ ແລະ ຈຳນວນປະຊາກອນ ເອົາມາເປັນຕົວປ່ຽນ ໃນການສຶກສາ ໃນການວິເຄາະແມ່ນການນຳໃຊ້ ວິທີ Fixed Effects Model ເພື່ອການວິເຄາະ ແລະ ນຳໃຊ້ ໂປຼແກມ Stata ໃນການວິເຄາະ ແລະ ອະທິບາຍຜົນທີ່ໄດ້ຮັບ.

ຈາກຜົນຂອງການສຶກສາພົບວ່າ ໃນປີ 2020 ເສດຖະກິດ 4 ແຂວງພາກໃຕ້ ຍັງມີການສືບຕໍ່ແນວໂນມ ເພີ່ມຂຶ້ນຈາກປີ 2019 ຄືແຂວງ ຈຳປາສັກມີມູນຄ່າລວມຍອດຜະລິດຕະພັນພາຍໃນເຖິງ

20,553,286 ລ້ານ ກີບ ຫຼື ເພີ່ມຂຶ້ນ 2.03% ແຂວງສາລະວັນມີ 4,503.57 ລ້ານກີບ ຫຼື ເພີ່ມຂຶ້ນ 1.37% ແຂວງເຊກອງມີມູນຄ່າເທົ່າກັບ 1,792,582 ລ້ານກີບ ຫຼື ເພີ່ມຂຶ້ນ 4.04% ແລະ ອັດຕະປື 2,974,300 ລ້ານ ຫຼື ເພີ່ມຂຶ້ນ 17.23%. ສຳລັບລາຍຈ່າຍງົບປະມານຂອງລັດຖະບານແຕ່ລະແຂວງເຫັນວ່າໃນປີ 2020 ແຂວງ ຈຳປ່າສັກມີມູນຄ່າສູງສຸດເຖິງ 707,096 ລ້ານ ຮອງລົງມາແມ່ນແຂວງສາລະວັນ ມູນຄ່າສູງເຖິງ 439,938 ລ້ານກີບຕໍ່ມາແມ່ນ ແຂວງ ອັດຕະປືມີລາຍຈ່າຍມູນຄ່າ 331,330 ລ້ານກີບ ແລະ ແຂວງເຊກອງມີມູນຄ່າ 293,630 ລ້ານກີບ ແລະ ມູນ ຄ່າສົ່ງອອກແຕ່ລະແຂວງກໍ່ມີຄວາມແຕກຕ່າງຄື ແຂວງຈຳປາສັກ ມີມູນຄ່າການສົ່ງອອກສູງກວ່າໝູ່ ໃນປີ 2020 ແຂວງ ຈຳປາສັກ ມີມູນຄ່າການສົ່ງອອກ 263,614 ລ້ານກີບ ຮອງລົງມາແມ່ນແຂວງສາລະວັນມີມູນຄ່າ 134,179 ລ້ານກີບ ສຳລັບແຂວງອັດຕະປືມີມູນຄ່າ 131,031 ລ້ານກີບ ແລະ ແຂວງເຊກອງມີມູນຄ່າ 15,028 ລ້ານກີບ. ມູນຄ່າການນຳເຂົ້າສິນຄ້າແຂວງຈຳປ່າສັກນັ້ນສູງທີ່ສຸດ ເຊິ່ງມີມູນຄ່າການນຳເຂົ້າສູງເຖິງ 132,875 ລ້ານກີບ, ແຂວງອັດຕະປືມີມູນຄ່າເປັນອັນດັບ 2 ເຊິ່ງມີມູນຄ່າການນຳເຂົ້າທັງໝົດ 126,935 ລ້ານກີບ ແຂວງ ສາລະວັນມີມູນຄ່າ 8,992 ລ້ານກີບ ແລະ ສຸດທ້າຍແມ່ນແຂວງອັດຕະປື ມີມູນຄ່າ 793 ລ້ານ ກີບ.

ຜົນຈາກການຄາດປະມານເຫັນວ່າ: ການໃຊ້ຈ່າຍຂອງລັດຖະບານ (EP) ລາຍຈ່າຍຂອງລັດຖະບານແມ່ນມີຜົນໃນທິດທາງບວກຕໍ່ກັບລວມຍອດຜະລິດຕະພັນພາຍໃນ (GDP) ດ້ວຍລະດັບຄວາມເຊື່ອໝັ້ນ 95% ໝາຍຄວາມວ່າ ເມື່ອລັດຖະບານມີການໃຊ້ຈ່າຍເພີ່ມຂຶ້ນ 1% ຈະສົ່ງຜົນເຮັດໃຫ້ GDP ເພີ່ມຂຶ້ນ 0.18%. ການສົ່ງອອກສິນຄ້າ (Export) ການສົ່ງອອກສິນຄ້າ ແມ່ນມີຜົນໃນທິດທາງບວກຕໍ່ກັບລວມຍອດຜະລິດຕະພັນພາຍໃນ ດ້ວຍລະດັບຄວາມເຊື່ອໝັ້ນ 90%. ໝາຍຄວາມວ່າ ເມື່ອການສົ່ງອອກເພີ່ມຂຶ້ນ 1% ຈະສົ່ງຜົນເຮັດໃຫ້ GDP ເພີ່ມຂຶ້ນ 0.19%. ການນຳເຂົ້າສິນຄ້າ (Import) ການສົ່ງອອກສິນຄ້າ ແມ່ນມີການພົວພັນໃນທິດທາງລົບຕໍ່ກັບ GDP ແຕ່ລະດັບຄວາມເຊື່ອໝັ້ນບໍ່ຮອດ 90%. ປະຊາກອນ (POP) ປະຊາກອນແມ່ນມີຜົນໃນທິດທາງບວກຕໍ່ກັບລວມຍອດຜະລິດຕະພັນພາຍໃນ ດ້ວຍລະດັບຄວາມເຊື່ອໝັ້ນ 99% ໝາຍຄວາມວ່າ ເມື່ອປະຊາກອນເພີ່ມຂຶ້ນ 1% ຈະສົ່ງຜົນໃຫ້ GDP ເພີ່ມຂຶ້ນ 4.64%.

## 7. ຄວາມຮູ້ບຸນຄຸນ

ໄລຍະເວລາ 2 ປີ ທີ່ເປັນນັກສຶກສາຮ່ຳຮຽນເອົາວິຊາຄວາມຮູ້ຢູ່ທີ່ ຄະນະເສດຖະສາດ ແລະ ການຄຸ້ມ ຄອງແຫ່ງນີ້ ເຊິ່ງໄດ້ຖືວ່າເປັນຜົນສຳເລັດອັນຍິ່ງໃຫຍ່ ແລະ ສູງສົ່ງທີ່ສຸດໃນຊີວິດ ກ່ອນອື່ນໝົດຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງມະຫາວິທະຍາໄລຈຳປາສັກໂດຍສະເພາະ ແມ່ນຄະນະເສດຖະສາດ ແລະ ການຄຸ້ມຄອງ ພ້ອມດຽວກັນນັ້ນກໍ່ສະແດງຄວາມຮູ້ບຸນຄຸນຢ່າງສູງມາຍັງບັນດາ ຄູອາຈານໃນຄະນະເສດຖະສາດ ແລະ ການຄຸ້ມຄອງ ທີ່ໄດ້ເສຍສະຫຼະເວລາອັນມີຄ່າເຂົ້າມາໃນການສິດສອນ, ຖ່າຍທອດວິຊາຄວາມຮູ້ອັນລ້ຳຄ່າ ແລະ ປະສົບການຕ່າງໆໃຫ້. ພິເສດເປັນຢ່າງຍິ່ງຂໍສະແດງຄວາມຮູ້ບຸນຄຸນອັນສູງສົ່ງມາຍັງ ອາຈານ ປອ ຂັນທະລີ ພົມມະເສນ, ອາຈານ ປທ ສັນຕິ ໂສພາ, ອາຈານ ປທ ຈັນທະສອນ ວັນນະວົງ ເຊິ່ງແມ່ນອາຈານທີ່ປຶກສາທີ່ໄດ້ໃຫ້ຄຳແນະນຳ, ກວດບົດ ແລະ ເອົາໃຈໃສ່ຕິດຕາມໃນການຂຽນບົດຄັ້ງນີ້ຈົນເຮັດ ໃຫ້ໂຄງການຂຽນບົດຈົບຊັ້ນໃນຄັ້ງນີ້ຈົນ

ປະສິບຜົນສຳເລັດ ແລະ ຜ່ານໄປດ້ວຍດີ. ພ້ອມດຽວກັນນັ້ນກໍ່ຂໍ ຂອບໃຈມາຍັງອາຈານທຸກໆທ່ານທີ່ຄອຍໃຫ້ການຊ່ວຍເຫຼືອ ແລະ ຊີ້ນຳວິທີທາງໃນການຂຽນບົດໃນຄັ້ງນີ້ ດ້ວຍ. ຂໍຂອບໃຈມາຍັງໜ່ວຍງານທີ່ກ່ຽວຂ້ອງ ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ, ພະແນກແຜນການ ແລະ ການລົງທຶນຂອງແຂວງຈຳປາສັກ, ແຂວງສາລະວັນ, ແຂວງ ເຊກອງ ແລະ ແຂວງ ອັດຕະປື ທີ່ໃຫ້ຄວາມຮ່ວມມື, ໃຫ້ຄຳປຶກສາ ແລະ ສະໜອງຂໍ້ມູນທີ່ຈຳເປັນເຂົ້າໃນການຂຽນບົດຄັ້ງນີ້ພ້ອມ ດຽວກັນນັ້ນຂໍຂອບໃຈຄະນະກຳມະການປ້ອງກັນບົດຈົບຊັ້ນທີ່ໄດ້ໃຫ້ໂອກາດໃນການປ້ອງກັນບົດ ແລະ ໃຫ້ຄຳແນະນຳທີ່ດີ. ທ້າຍສຸດນີ້ຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫຼືອມາຍັງພໍ່ແມ່, ອ້າຍເອື້ອຍນ້ອງ ແລະ ບັນດາໝູ່ເພື່ອນ ນັກສຶກສາທີ່ໃຫ້ການສະໜັບສະໜູນທັງເລື່ອງຂອງງົບປະມານ ແລະ ຄຳແນະນຳ, ຄຳຄິດເຫັນຕ່າງໆຕະຫຼອດ ໄລຍະເວລາການສຶກສາ. ສະນັ້ນ, ຂໍສະແດງຄວາມຂອບໃຈ, ຮູ້ບຸນຄຸນມາໃນທີ່ນີ້ດ້ວຍ ແລະ ຈະຈາລຶກບຸນຄຸນ ນີ້ໄວ້ຕະຫຼອດໄປ.

## 8. ເອກະສານອ້າງອີງ


ກະຊວງແຜນການ ແລະ ການລົງທຶນ. (1990). ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ III1991-1995. ນະຄອນຫຼວງວຽງຈັນ ສ ປ ປ ລາວ.

ໄກສອນ ຂຸນລະວົງສາ. (2010). ຜົນກະທົບຈາກການລົງທຶນພາກລັດ ແລະ ຕ່າງປະເທດຕໍ່ກັບການຂະຫຍາຍຕົວຂອງລວມຍອດຜະລິດຕະພັນຂະແໜງອຸດສາຫະກຳ (ບົດໂຄງການຈົບຊັ້ນປະລິນຍາຕີ). ມະຫາວິທະຍາໄລແຫ່ງຊາດ.

ກັນລະຍາ ແພງວິໄລ. (2010). ຜົນກະທົບຂອງການໃຊ້ ຈ່າຍງົບປະມານເຂົ້າໃນການລົງທຶນຕໍ່ກັບການຂະຫຍາຍຕົວຂອງເສດຖະກິດແຂວງວຽງຈັນ (ບົດໂຄງການຈົບຊັ້ນປະລິນຍາຕີ ). ມະຫາວິທະຍາໄລແຫ່ງຊາດ.

ສຸກັນຍາ ພ່ວງພຸ່ມ. (2007). ໄດ້ສຶກສາກ່ຽວກັບຜົນກະທົບຂອງການສົ່ງອອກທີ່ມີຕໍ່ການຈະເລີນເຕີບໂຕຂອງເສດຖະກິດຂອງກຸ່ມປະເທດໃນລຸ່ມແມ່ນ້ຳຂອງ (ວິທະຍານິພົນປະລິນຍາໂທ). ມະຫາວິທະຍາໄລຊຽງໃໝ່ .

ສານິທີ ຣັດຕະນະສຸລັງ. (2008). ຜົນກະທົບຈາກການລົງທຶນໂດຍກົງຈາກຕ່າງປະເທດທີ່ມີ ຕໍ່ການຈະເລີນເຕີບໂຕທາງດ້ານເສດຖະກິດຂອງປະເທດອາຊຽນ(ວິທະຍານິພົນປະລິນຍາໂທ) ມະຫາວິທະຍາໄລຊຽງໃໝ່ .ງ

ທະນະຄານແຫ່ງ ສປປ ລາວ. (2000). ບົດລາຍງານເສດຖະກິດປະຈຳປີ 2000. ນະຄອນຫຼວງວຽງຈັນ ສປປ ລາວ.

ທະນະຄານແຫ່ງ ສປປ ລາວ. (2012). ບົດລາຍງານເສດຖະກິດປະຈຳປີ 2012. ນະຄອນຫຼວງວຽງຈັນ ສ ປປ ລາວ.

ທະນະຄານແຫ່ງ ສປປ ລາວ. (2013). ບົດລາຍງານເສດຖະກິດປະຈຳປີ 2015. ນະຄອນຫຼວງວຽງຈັນ ສປ ປ ລາວ.

ນິລະມົນ ສຸທຳມະກິດ. (2004). ຄວາມໝາຍຂອງການຈະເລີນເຕີບໂຕ ແລະ ພັດທະນາເສດຖະກິດ ແລະ ວິວັດທະນາການເສດຖະສາດພັດທະນາ. ຄະນະເສດຖະສາດ. ມະຫາວິທະຍາໄລທຳມະສາດ. ປະເທດໄທ.

ພະແນກແຜນການ ແລະການລົງທຶນ ແຂວງ ຈຳປາສັກ. (2020). ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ (2021-2025) ຂອງແຂວງຈຳປາສັກ

ພະແນກແຜນການ ແລະການລົງທຶນ ແຂວງ ອັດຕະປື. (2020). ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ (2021-2025) ຂອງແຂວງອັດຕະປື

ພະແນກແຜນການ ແລະການລົງທຶນ ແຂວງ ສາລະວັນ. (2020). ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ (2021-2025) ຂອງແຂວງສາລະວັນ

ພະແນກແຜນການ ແລະການລົງທຶນ ແຂວງ ເຊກອງ. (2020). ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ (2021-2025) ຂອງແຂວງເຊກອງ

ລັດຕະນາ ສາຍຄະນິດ. (2003). ໄດ້ສຶກສາກຽ່ວກັບຜົນກະທົບຂອງການສົ່ງອອກທີ່ມີຕໍ່ການຈະເລີນເຕີບໂຕ ຂອງເສດຖະກິດຂອງປະເທດໄທ (ວິທະຍານິພົນປະລິນຍາໂທ). ມະຫາວິທະຍາໄລລາດຊະພັດ.

Breitung, J. (2001). The local power of some unit root tests for panel data. Nonstationary panels, panel cointegration, and dynamic panels, Emerald Group Publishing Limited: 161-177.

Breitung, J. and S. Das (2005). "Panel unit root tests under cross-sectional dependence." Statistica Neerlandica 59(4): 414-433.

Choi, I. (2001). "Unit root tests for panel data." Journal of international money and Finance 20(2): 249-272.

Cobb, C. W & Douglas, P. H. (1928). The American Economic Review. Washington, DC

Daron, A. (2009). The Solow Growth Model. Introduction to Modern Economic Growth. Princeton University Press.

Feder G. (1982). On Exports And Economic Growth . World Bank. Washington, DC.

Gujarati, D. N., & Porter, D. C. (2009). Basic Econometrics, McGraw-Hill, Singapore

Hadri, K. (2000). Testing for stationarity in heterogeneous panel data. Journal of Econometrics. Vol 3, pp 148–161.

Harris, R. D. and E. Tzavalis (1999). "Inference for unit roots in dynamic panels where the time dimension is fixed." Journal of econometrics 91(2): 201-226.

Hoechle, D. (2007). Robust standard errors for panel regressions with cross-sectional dependence. The stata journal, 7(3), 281-312.)

Im, K. S., et al. (2003). "Testing for unit roots in heterogeneous panels." Journal of econometrics 115(1): 53-74.

Levin, A., Lin, C. F., & Chu, C. J. (2002). Unit root tests in panel data, Asymptotic and finite-sample properties, Journal of Econometrics 108, 1–24.

Ndambiri, H. K., et al. (2012). "Determinants of economic growth

in Sub-Saharan Africa: A panel data approach."

Oyebowale, A. Y. and A. S. Algarhi (2020). "Macroeconomic determinants of economic growth in Africa." International Review of Applied Economics **34**(6): 839-857.

Pardumna, B. R. (1986). Effects of Foreign Capital Inflows on Developing Countries of Asia. Asian Development Bank.

Reyna, T. O. (2007). Panel Data Analysis Fixed and Random Effects using Stata.
Princeton University

Taş, N., et al. (2013). "Analyzing macroeconomic indicators of economic growth using panel data." Journal of Finance and Investment Analysis **2**(3): 41-53.

William, G. T. (1979). Technical Efficiency in Production in a Developing Country. Oxford Economic Papers